ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283
BANK OF THE LAO PDR



## ທະນາຄານແຫ່ງ ສປປ ລາວ

# ຈັດກອງປະຊຸມພົບປະແລກປ່ຽນລະຫວ່າງການນຳ, ອາດີດການນຳ ແລະ ພະນັກງານຂົງເຂດທະນາຄານ




ໃນຕອນບ່າຍຂອງວັນທີ 5 ຕຸລາ ປີ 2022 ເວລາ 13:30 ໂມງ ຢູ່ຫ້ອງປະຊຸມຊັ້ນ VII ທຫລ ເພື່ອເປັນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມ ໃຫຍ່ຄັ້ງທີ XI ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ຂອງລັດ, ມະຕິກອງປະຊຸມໃຫຍ່ຄັ້ງທີ IV ຂອງອົງຄະນະພັກ ທຫລ, ການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ເຂົ້າສູ່ການເຄື່ອນໄຫວຕົວຈິງ ຢູ່ຂະແໜງການທະ ນາຄານ ແລະ ເພື່ອເປັນການຂໍ່ານັບຮັບຕ້ອນວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 54 ປີ; ທະນາຄານແຫ່ງ ສປປ ລາວ ໄດ້ຕ້ອນຮັບການລົງມາຢ້ຽມຢາມພົບປະໂອ້ລົມຂອງ **ທ່ານ ນ. ປານີ ຢາທໍ່ຕູ້** ກຳມະການກົມການເມືອງສູນກາງພັກ, ຮອງປະທານປະເທດແຫ່ງ ສປປ ລາວ ແລະ ອາດີດພະນັກງານການນຳຫຼັກແຫຼ່ງ-ອາວຸໂສບໍານານຈຳນວນໜຶ່ງຂອງທະນາຄານແຫ່ງ ສປປ ລາວ; ຊຶ່ງໃນພິທີດັ່ງກ່າວໃຫ້ກຽດຕ້ອນຮັບໂດຍ **ທ່ານ ບຸນເຫຼືອ ສິນໄຊວໍຣະວົງ** ເລຂາຄະ ນະບໍລິຫານງານພັກ, ຜູ້ວ່າການ ທຫລ, ບັນດາສະຫາຍຄະນະປະຈຳພັກ-ຄະນະຜູ້ວ່າການ, ຄະນະບໍລິຫານງານພັກ ທຫລ, ບັນດາທ່ານຫົວໜ້າກົມ-ທຽບເທົ່າກົມ, ຕະຫຼອດຮອດພະນັກງານຫຼັກແຫຼ່ງຈຳນວນໜຶ່ງ.

 

ໃນພິທີດັ່ງກ່າວຜູ້ວ່າການ ທຫລ ຕາງໜ້າໃຫ້ຄະນະນຳ ທຫລ ໃຫ້ກຽດລາຍງານໂດຍເຊບຕໍ່ກັບສະພາບການເຄື່ອນໄຫວວຽກງານຂອງຂະແໜງທະນາຄານ ໃນໄລຍະ 9 ເດືອນຕົ້ນປີ ແລະ ທິດທາງແຜນການ 3 ເດືອນທ້າຍປີ 2022; ຈາກນັ້ນ, ກອງປະຊຸມຍັງໄດ້ປຶກສາຫາລືແລກປ່ຽນບົດຮຽນນຳພະນັກງານອາວຸໂສບຳນານໃນວຽກວິຊາສະເພາະທະນາຄານ ໃນເງື່ອນໄຂທີ່ພວກເຮົາປະເຊີນໜ້າກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ.

ພ້ອມນີ້ **ທ່ານ ນ. ປານີ ຢາທໍ່ຕູ້** ກຳມະການກົມການເມືອງສູນກາງພັກ, ຮອງປະທານປະເທດແຫ່ງ ສປປ ລາວ ໃຫ້ມີຄວາມເຫັນເນັ້ນໜັກບາງບັນຫາສຳຄັນເຊັ່ນ: ໃຫ້ຄະນະນຳ ທຫລ ເອົາໃຈໃສ່ ປັບປຸງແບບແຜນການນຳພາ ແລະ ແບບແຜນວິທີເຮັດວຽກຂອງຄະນະພັກແຕ່ລະຂັ້ນໃຫ້ຄ່ອງ ຕົວຍິ່ງຂຶ້ນ; ໃຫ້ສືບຕໍ່ສຸມໃສ່ສ້າງ ແລະ ປັບປຸງນິຕິກຳ ຂັ້ນຕ່າງໆຂອງຂະແໜງທະນາຄານ ຕ້ອງຍົກສູງຄຸນນະພາບຂອງວຽກງານກວດກາ; ດ້ານວິຊາສະເພາະ; ຕ້ອງສູ້ຊົນຮັກສາສະຖຽນລະພາບເງິນຕາແຫ່ງຊາດ ໃຫ້ມີຄວາມໝັ້ນທ່ຽງຍາວນານ, ປັບປຸງອັດຕາດອກເບ້ຍພື້ນຖານຂອງທະນາຄານກາງ ໃຫ້ສາມາດຊີ້ນຳຕະຫຼາດເງິນໄດ້ ຢ່າງມີປະສິດທິຜົນສູງ; ຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ເຂັ້ມງວດ, ສູ້ຊົນເພີ່ມປະລິມານຄັງສຳຮອງເງິນຕາຕ່າງປະເທດ ໃຫ້ບັນລຸຕາມແຜນການທີ່ກຳນົດໄວ້; ປັບປຸງກົນໄກການຄຸ້ມຄອງ-ບໍລິຫານທະນາຄານທຸລະກິດ ໃຫ້ເປັນລະບົບຄົບຊຸດ ແລະ ເຂັ້ມງວດ ໃນຕ້ອງປັບປຸງການເຄື່ອນໄຫວຂອງທະນາຄານທຸລະກິດລັດໃຫ້ມີອັນຕັ້ງໜ້າດີຂຶ້ນ ໂດຍສະເພາະແມ່ນໃຫ້ສາ ມາດເປັນເຈົ້າການທາງດ້ານການດຳເນີນທຸລະກິດຢ່າງແທ້ຈິງ;

ພິທີພົບປະແລກປ່ຽນບົດຮຽນດັ່ງກ່າວ ໄດ້ປິດລົງໃນເວລາ 16:00 ໂມງ ຂອງວັນດຽວກັນ ໂດຍບັນຍາກາດຟົດຟື້ນ, ສ້າງສັນ ແລະ ປະສົບຜົນສຳເລັດຕາມລະດັບຄາດໝາຍ.




ຂ່າວໂດຍ: ທ່ານ ສອນເພັດ ຈັນແດງ ຫົວໜ້າພະແນກສັງລວມ, ຫ້ອງການ

ຮູບໂດຍ: ທ. ສົມພົດ ແລະ ນ. ທິດສະບາ

*ເສດຖະກິດລາວຈະເຂັ້ມແຂງຖ້າປວງຊົນລາວຮ່ວມແຮງນຳໃຊ້ເງິນກີບ*